ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 1433 /ກສ

ນະຄອນຫຼວງວຽງຈັນ, ວັນທີ 25 SEP 2025

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ

- ອີງຕາມ ກົດໝາຍ ວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ) ສະບັບເລກທີ 07/ສພຊ, ລົງວັນທີ 12 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄັ້ງວັນທີ 29 ສິງຫາ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ແນໃສ່ກໍ່ສ້າງວິຊາການດ້ານກະສິກຳ, ປ່າໄມ້ ແລະ ສິ່ງແວດລ້ອມ ຕາມແຜນຍຸດທະສາດການພັດທະນາບຸກຄະລາກອນ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ຂຽນເປັນຕົວອັກສອນຫຍໍ້ວ່າ "**ວກປບ**" ແມ່ນກົງຈັກການຈັດຕັ້ງໜຶ່ງ ທີ່ເປັນຫົວໜ່ວຍວິຊາການລະດັບສອງ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີພາລະບົດບາດໃນການກໍ່ສ້າງນັກວິຊາການດ້ານການປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ສິ່ງແວດລ້ອມ, ທຸລະກິດກະສິກຳ ແລະ ສັດຕະວະແພດ ພ້ອມທັງຝຶກອົບຮົມເຕັກນິກວິຊາການ ໃຫ້ແກ່ນັກຮຽນ, ນັກສຶກສາ, ພະນັກງານ, ຊາວກະສິກອນ ແລະ ຜູ້ປະກອບການ ທັງພາກລັດ ແລະ ເອກະຊົນ ຕາມແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງກະຊວງ ບົນພື້ນຖານ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍອາຊີວະສຶກສາ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມີໜ້າທີ່ ດັ່ງນີ້:

1. ປະຕິບັດ ກົດໝາຍ, ດຳລັດ, ນິຕິກຳຕ່າງໆ ຂອງຂັ້ນເທິງ ແລະ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ຄົ້ນຄວ້າ, ຜັນຂະຫຍາຍແນວທາງ, ນະໂຍບາຍ ຂອງພັກ ແລະ ລັດຖະບານ, ແຜນຍຸດທະສາດ ຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ ມາເປັນແຜນການ, ແຜນງານ ແລະ ໂຄງການສະເພາະຂອງຕົນ ພ້ອມທັງຮັບຜິດຊອບໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້າ, ນຳສະເໜີ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ແຜນການບຳລຸງກໍ່ສ້າງພະນັກງານ-ລັດຖະກອນຂອງຕົນ ໃນແຕ່ລະໄລຍະບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ; ປັບປຸງແບບແຜນວິທີເຮັດວຽກ, ກົນໄກການຄຸ້ມຄອງ, ການບໍລິຫານ ຂອງວິທະຍາໄລ ໃຫ້ມີປະສິດທິພາບ;
4. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ນຳສະເໜີນິຕິກຳຕ່າງໆ ກ່ຽວກັບວຽກງານການຄຸ້ມຄອງບໍລິຫານວິທະຍາໄລ ພ້ອມທັງເຜີຍແຜ່ໃຫ້ຂະແໜງການພາຍໃນ ຂອງຕົນ ຢ່າງທົ່ວເຖິງ; ຈັດຕັ້ງການປະເມີນ ພະນັກງານ-ລັດຖະກອນປະຈຳປີ ເພື່ອເປັນບ່ອນອີງໃນການປະຕິບັດນະໂຍບາຍຍ້ອງຍໍ ຕໍ່ຜູ້ທີ່ມີຄວາມຫ້າວຫັນ ແລະ ມີຜົນງານດີເດັ່ນ ແລະ ປະຕິບັດວິໄນຕໍ່ຜູ້ທີ່ກະທຳຜິດ;
5. ສຶກສາອົບຮົມດ້ານການເມືອງແນວຄິດໃຫ້ພະນັກງານ-ຄູອາຈານ ແລະ ນັກສຶກສາ ໃຫ້ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ລັດ, ມີສະຕິຕໍ່ການຈັດຕັ້ງ, ປະຕິບັດກົດໝາຍ ແລະ ລະບຽບການ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີຄວາມສາມັກຄີ, ຕ້ານທຸກປະກົດການຫຍໍ້ທໍ້ໃນສັງຄົມ ແລະ ກົນອຸບາຍທັບມ້າງ ໂດຍສັນຕິຂອງສັດຕູ;
6. ກໍ່ສ້າງພະນັກງານວິຊາການລະດັບຕ່າງໆ ທາງດ້ານການປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ສິ່ງແວດລ້ອມ, ທຸລະກິດກະສິກຳ ແລະ ສັດຕະວະແພດ ໃຫ້ມີຄຸນນະພາບ, ທັນເປັນທັນສະໄໝ ໂດຍການປັບປຸງ ແລະ ພັດທະນາຫຼັກສູດໃຫ້ໄປຕາມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ສ້າງເປັນຜູ້ປະກອບການ, ປັບປຸງເຕັກນິກການຮຽນ-ການສອນ; ການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດຫຼັກສູດ ກໍຄືຂະບວນການຮຽນ-ການສອນ ຂອງວິທະຍາໄລ ໃຫ້ມີຄວາມສອດຄ່ອງກັບສະພາບເງື່ອນໄຂຕົວຈິງ;
7. ສ້າງຄວາມເຂັ້ມແຂງ, ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານຄູ-ອາຈານ ຕາມສາຍວິຊາສະເພາະຕ່າງໆ ຕາມມາດຕະຖານລະດັບຊາດ, ພາກພື້ນ ແລະ ສາກົນ ໂດຍການຍົກລະດັບໄລຍະສັ້ນ ແລະ ໄລຍະຍາວ ເພື່ອຮັບປະກັນໃຫ້ແກ່ການບໍລິຫານຈັດການ ແລະ ການປະຕິບັດໜ້າທີ່ວິຊາສະເພາະຂອງຕົນ ກໍຄືແຜນພັດທະນາຂອງວິທະຍາໄລ ໃຫ້ສຳເລັດຕາມຄາດໝາຍ ແລະ ມີປະສິດທິພາບ ແລະ ປະສິດທິຜົນ;
8. ໂຄສະນາ, ສົ່ງເສີມ ແລະ ເລືອກເຟັ້ນເອົານັກສຶກສາເຂົ້າຮຽນ ຕາມຄວາມສາມາດຕົວຈິງ ຂອງວິທະຍາໄລ ແລະ ປະຕິບັດຕາມແຜນພັດທະນາບຸກຄະລາກອນ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ວາງອອກ;
9. ສ້າງລາຍຮັບວິຊາການ ແລະ ພັດທະນາກິດຈະກຳການຜະລິດ (ຟາມ, ສວນສາທິດ) ຕິດພັນກັບການຮຽນ-ການສອນ, ການຝຶກອົບຮົມ, ການຄົ້ນຄວ້າທົດລອງ ທາງວິທະຍາສາດ ແລະ ແທດເໝາະກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

10. ສ້າງ ແລະ ປັບປຸງ ຫຼັກສູດຝຶກອົບຮົມ ໄລຍະສັ້ນ ແລະ ດຳເນີນການຝຶກອົບຮົມທາງດ້ານວິຊາການ ໃຫ້ແກ່ພະນັກງານກະສິກຳ, ປ່າໄມ້ ແລະ ສິ່ງແວດລ້ອມ ແຂວງ, ນະຄອນ, ເມືອງ, ຕາແສງ, ບ້ານ, ຊາວກະສິກອນ, ພະນັກງານຂອງໂຄງການ ແລະ ຫົວໜ່ວຍທຸລະກິດທີ່ມີຄວາມສົນໃຈ;
11. ພົວພັນຮ່ວມມື ແລະ ຍາດແຍ່ງການຊ່ວຍເຫຼືອຈາກອົງການຕ່າງໆ ທັງພາກລັດ ແລະ ເອກະຊົນ, ອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ ເພື່ອພັດທະນາວິທະຍາໄລໃຫ້ກ້າວໜ້າຂຶ້ນໄປເລື້ອຍໆ;
12. ຄຸ້ມຄອງ, ບໍລິຫານການເງິນ ແລະ ຊັບສິນຂອງວິທະຍາໄລ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫຼຸບ, ສັງລວມ ຕາມກົດໝາຍ ແລະ ລະບຽບການ;
13. ສ້າງ, ຄຸ້ມຄອງ, ປັບປຸງ ແລະ ພັດທະນາ ຖານຂໍ້ມູນສະຖິຕິ ແລະ ວຽກງານຂ່າວສານ ຂອງວິທະຍາໄລ ເພື່ອເຊື່ອມໂຍງກັບຖານຂໍ້ມູນ ຂອງກົມວິຊາການ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ;
14. ຈັດຕັ້ງແລກປ່ຽນປະສົບການ ລະຫວ່າງ ຄູ-ອາຈານ ກັບບັນດາວິທະຍາໄລ ທີ່ຂຶ້ນກັບກະຊວງ, ບັນດາສະຖາບັນການສຶກສາຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ; ເຂົ້າຮ່ວມຂະບວນການແຂ່ງຂັນທັກສະສີມື, ຫົວຄິດປະດິດສ້າງ ໃນການຄົ້ນຄວ້າວິທະຍາສາດ, ການສົ່ງເສີມ ແລະ ບໍລິການດ້ານເຕັກນິກດ້ານການປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ສິ່ງແວດລ້ອມ, ທຸລະກິດກະສິກຳ ແລະ ສັດຕະວະແພດ ທັງພາຍໃນ ແລະ ນອກ ວິທະຍາໄລ;
15. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອປ້ອງກັນຄວາມສະຫງົບ ຮັບປະກັນຄວາມປອດໄພ, ຮັກສາສະພາບແວດລ້ອມ, ສະກັດກັ້ນສິ່ງເສບຕິດ, ພະຍາດຕິດຕໍ່ ແລະ ປະກົດການຫຍໍ້ທໍ້ຕ່າງໆ;
16. ຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ, ພັດທະນາພື້ນຖານວັດຖຸເຕັກນິກ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອນຳໃຊ້ເຂົ້າໃນການຮຽນ-ການສອນ, ການຜະລິດ, ການບໍລິການ, ໃຫ້ຄຳປຶກສາ ດ້ານວິຊາການ ໃຫ້ແກ່ສັງຄົມ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
17. ສ້າງ ແລະ ພັດທະນາຖານຂໍ້ມູນ ກ່ຽວກັບສະຖິຕິນັກສຶກສາທີ່ສຳເລັດການສຶກສາ ເພື່ອຕິດຕາມ ແລະ ປະເມີນຜົນ ດ້ານການປະກອບອາຊີບພາຍຫຼັງຮຽນຈົບ;
18. ເກັບກຳຂໍ້ມູນຈາກ ຜູ້ທີ່ຮຽນຈົບ, ຜູ້ຈ້າງງານ, ສະຖານທີ່ຝຶກງານ ທັງພາກລັດ ແລະ ເອກະຊົນ ພ້ອມທັງຈັດກິດຈະກຳພົບປະ ອະດີດນັກສຶກສາ ຂອງວິທະຍາໄລ ເພື່ອນຳຂໍ້ມູນມາປັບປຸງຫຼັກສູດ ແລະ ວິທີການສິດສອນໃຫ້ມີຄຸນນະພາບດີກວ່າເກົ່າ;
19. ນຳພາ-ຊີ້ນຳ ອົງການຈັດຕັ້ງມະຫາຊົນ ໃຫ້ກາຍເປັນກຳລັງແຮງໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດທີ່ວິທະຍາໄລ ວາງອອກ ພ້ອມທັງສົ່ງເສີມບົດບາດຍິງ-ຊາຍ ແລະ ພັດທະນາຄວາມກ້າວໜ້າຂອງແມ່ຍິງ ໃນທົ່ວວິທະຍາໄລ;
20. ອະນຸລັກຮັກສາ ແລະ ສົ່ງເສີມວຽກງານກິລາ, ສິລະປະ, ວັດທະນະທຳ, ຈາລິຍະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ພ້ອມທັງປົກປັກຮັກສາສິ່ງແວດລ້ອມ ແລະ ການສົ່ງເສີມກະສິກຳທີ່ດີ (GAP);
21. ສັງລວມ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ຂອງວິທະຍາໄລ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງວິທະຍາໄລ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງເປັນປົກກະຕິ ແລະ ທັນເວລາ;
22. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີຜູ້ຊີ້ນຳ.

**ມາດຕາ 4 ຂອບເຂດສິດ**

ວິທະຍາໄລກະສິກໍາ ແລະ ປ່າໄມ້ ບໍລິຄໍາໄຊ ມີສິດ ດັ່ງນີ້:

1. ສະເໜີລັດຖະມົນຕີ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ກໍານົດຕໍາແໜ່ງງານ, ບັນຈຸ-ສັບຊ້ອນ, ແຕ່ງຕັ້ງ ແລະ ປະຕິບັດນະໂຍບາຍຕໍ່ບຸກຄະລາກອນຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ທິດກະທັດລັດ, ເຂັ້ມແຂງ ແລະ ມີປະສິດທິພາບ, ປະສິດທິຜົນ ຕາມກົດໝາຍ ແລະ ລະບຽບການ;
2. ຮຽກໂຮມພະນັກງານ-ລັດຖະກອນ ພາຍໃນວິທະຍາໄລ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ, ເຂົ້າຮ່ວມງານວາງສະແດງສິນຄ້າກະສິກໍາ, ກົນຈັກກະສິກໍາ ແລະ ຕະຫຼາດນັດ, ຝຶກອົບຮົມ, ສໍາມະນາວິຊາການ ແລະ ລົງເຮັດວຽກຢູ່ທ້ອງຖິ່ນຮາກຖານ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ;
3. ນໍາສະເໜີລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ ພິຈາລະນາແຜນພັດທະນາວິທະຍາໄລ ແລະ ພິຈາລະນາ ການສະເໜີການນໍາໃຊ້ຫຼັກສູດ, ສ້າງ ແລະ ຂະຫຍາຍສາຂາວິຊາໃໝ່ ຈາກກະຊວງສຶກສາທິການ ແລະ ກິລາ;
4. ຄົ້ນຄວ້າ ແລະ ນໍາສະເໜີ ການຮັບຮອງຕໍາແໜ່ງວິຊາການ ໃຫ້ແກ່ຄູ-ອາຈານ ຕາມລະບຽບການ;
5. ອອກຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ, ແຈ້ງການ, ໃບຢັ້ງຢືນ ແລະ ເອກະສານທາງການຕ່າງໆ ຂອງວິທະຍາໄລ;
6. ອອກໃບປະກາສະນີຍະບັດ ໃຫ້ແກ່ຜູ້ສໍາເລັດການສຶກສາ ຕາມການຕົກລົງ ຂອງລັດຖະມົນຕີ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ;
7. ປະຕິບັດການຮ່ວມມືທາງດ້ານວິຊາການ ກັບບັນດາສະຖາບັນການສຶກສາ ແລະ ສະຖານປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທັງພາກລັດ ແລະ ເອກະຊົນ ຕາມການຕົກລົງເຫັນດີ ຂອງການນໍາກະຊວງກະສິກໍາ ແລະ ສິ່ງແວດລ້ອມ;
8. ຄຸ້ມຄອງ ແລະ ນໍາໃຊ້ບຸກຄະລາກອນ, ງົບປະມານ, ຊັບສິນ ຂອງລັດ ຕາມລະບຽບການ; ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງພະນັກງານ, ຄູ-ອາຈານ ແລະ ນັກສຶກສາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
9. ເປີດກວ້າງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຫົວໜ່ວຍແຮງງານ ທັງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມ ເຂົ້າໃນການພັດທະນາວິທະຍາໄລ ໃຫ້ກ້າວໜ້າໃນແຕ່ລະໄລຍະ;
10. ຊຸກຍູ້, ຕິດຕາມ, ກວດກາ, ແນະນໍາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານການຮຽນ-ການສອນ ສາຂາວິຊາປູກຝັງ, ລ້ຽງສັດ, ການປະມົງ, ປ່າໄມ້, ສິ່ງແວດລ້ອມ, ທຸລະກິດກະສິກໍາ ແລະ ສັດຕະວະແພດ;
11. ຈັດຝຶກອົບຮົມເຕັກນິກວິຊາການດ້ານວິຊາການດັ່ງກ່າວ ໃຫ້ແກ່ພະນັກງານ, ຊາວກະສິກອນບັນດາ ເຜົ່າ ແລະ ຜູ້ປະກອບການ ທັງພາກລັດ ແລະ ເອກະຊົນ;
12. ເຂົ້າຮ່ວມກອງປະຊຸມປຶກສາຫາລື, ແລກປ່ຽນ, ສະເໜີຄໍາຄິດຄໍາເຫັນທີ່ພົວພັນເຖິງວຽກງານກະສິກໍາ ແລະ ສິ່ງແວດລ້ອມ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ຂອງຂັ້ນເທິງ;
13. ປະຕິບັດສິດອື່ນ ຕາມທີ່ກໍານົດໄວ້ໃນນິຕິກໍາອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີຜູ້ຊີ້ນໍາ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມີໂຄງປະກອບກົງຈັກ ດັ່ງນີ້:

1. ພະແນກບໍລິຫານ ແລະ ແຜນການ
2. ພະແນກພັດທະນາວິຊາການ
3. ພາກວິຊາປູກຝັງ
4. ພາກວິຊາລ້ຽງສັດ ແລະ ການປະມົງ
5. ພາກວິຊາທຸລະກິດກະສິກຳ
6. ພາກວິຊາປ່າໄມ້ ແລະ ສິ່ງແວດລ້ອມ
7. ພາກວິຊາສັດຕະວະແພດ

ນອກຈາກນີ້, ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ຍັງມີສະພາທີ່ປຶກສາ, ສະພາບໍລິຫານ ແລະ ສະພາວິຊາການ ຊຶ່ງເປັນກົງຈັກທີ່ບໍ່ປະຈຳການ.

**ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ**

ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ມີໂຄງປະກອບດ້ານບຸກຄະລາກອນ ດັ່ງນີ້:

1. ອຳນວຍການ ຈຳນວນ 1 ທ່ານ ຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານ ຂອງຕົນ.

   ໃນເວລາອຳນວຍການ ຕິດຂັດ ຕ້ອງມອບສິດໃຫ້ຮອງອຳນວຍການທ່ານໃດໜຶ່ງ ຮັກສາການແທນ.
2. ຮອງອຳນວຍການ ຈຳນວນໜຶ່ງ ຊ່ວຍອຳນວຍການ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ອຳນວຍການ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ.

   ຮອງອຳນວຍການ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການແທນນັ້ນ ໃຫ້ອຳນວຍການ ພາຍຫຼັງກັບມາປະຈຳການ.
3. ຫົວໜ້າພະແນກ ແລະ ທຽບເທົ່າ, ຮອງຫົວໜ້າພະແນກ ແລະ ທຽບເທົ່າ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ ຂອງບັນດາພະແນກ ແລະ ພາກວິຊາ

**ມາດຕາ 7 ໜ້າທີ່ ຂອງພະແນກບໍລິຫານ ແລະ ແຜນການ**

ພະແນກບໍລິຫານ ແລະ ແຜນການ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ, ຄຳແນະນຳ, ລະບຽບການ ກ່ຽວກັບວຽກງານຄຸ້ມຄອງບໍລິຫານ, ແຜນການ, ການເງິນ, ພິທີການ, ເລຂານຸການ ເປັນແຕ່ລະໄລຍະ;

2. ຄຸ້ມຄອງບໍລິຫານ, ບຸກຄະລາກອນ, ງົບປະມານ, ເອກະສານທາງການ ແລະ ພິທີການ, ການຈັດຊື້-ຈັດຈ້າງ, ການຄຸ້ມຄອງນຳໃຊ້ອາຄານສະຖານທີ່, ຊັບສິນບັດ ແລະ ສິ່ງອຳນວຍຄວາມສະດວກ, ວັດຖຸອຸປະກອນ ແລະ ພາຫະນະຮັບໃຊ້ທີ່ວິທະຍາໄລ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;
3. ສ້າງ ແລະ ປັບປຸງ ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ໄດ້ມາດຕະຖານ ບົນພື້ນຖານສອດຄ່ອງກັບແຜນພັດທະນາພື້ນຖານໂຄງລ່າງຂອງວິທະຍາໄລ ເພື່ອໃຫ້ເປັນບ່ອນສາທິດ, ທົດລອງ, ສ້າງຄວາມຊຳນານງານ ໃຫ້ພະນັກງານ-ລັດຖະກອນ, ຄູ-ອາຈານ ແລະ ນັກສຶກສາ;
4. ສ້າງແຜນພັດທະນາ ແລະ ປັບປຸງຄຸນນະພາບວຽກງານຂອງພະແນກ ໃຫ້ໄດ້ຕາມມາດຕະຖານການປະກັນຄຸນນະພາບການສຶກສາ ທີ່ທາງກະຊວງສຶກສາທິການ ແລະ ກິລາ ວາງອອກ;
5. ຄົ້ນຄວ້າ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ແຜນການບຳລຸງກໍ່ສ້າງພະນັກງານ-ລັດຖະກອນຂອງຕົນ ໃນແຕ່ລະໄລຍະບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ;
6. ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ແລະ ງົບປະມານຕ່າງໆ ພາຍໃນພະແນກບໍລິຫານ ແລະ ແຜນການ ແລະ ທີ່ວວິທະຍາໄລ;
7. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນ ພະນັກງານ-ລັດຖະກອນ ປະຈຳປີ, ປະຕິບັດນະໂຍບາຍ ແລະ ສະເໜີຍ້ອງຍໍ ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ສຳເລັດ ແລະ ມີຄຸນນະພາບ ພ້ອມທັງປະຕິບັດວິໄນຕໍ່ຜູ້ກະທຳຜິດ;
8. ເປັນໃຈກາງໃນການຄົ້ນຄວ້າ, ສັງລວມ ການຈັດຕັ້ງວຽກງານປະເມີນຜົນງານ ປະຈຳປີ ຂອງພະນັກງານ-ລັດຖະກອນ, ຄູ-ອາຈານ ພາຍໃນວິທະຍາໄລ; ປະຕິບັດນະໂຍບາຍ ແລະ ສະເໜີຍ້ອງຍໍ ພາຍໃນໃຫ້ແກ່ບຸກຄົນ ທີ່ມີຄວາມຫ້າວຫັນ, ມີຜົນງານດີເດັ່ນ ປະກອບສ່ວນໃນການປະຕິບັດໜ້າທີ່ສຳເລັດ ແລະ ມີຄຸນນະພາບ ລວມທັງປະຕິບັດວິໄນຕໍ່ຜູ້ກະທຳຜິດ;
9. ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ລັດຖະກອນ ຂອງພະແນກບໍລິຫານ ແລະ ແຜນການໃຫ້ສົມຄູ່ກັບໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;
10. ພົວພັນຮ່ວມມື, ການຂະຫຍາຍເຄືອຂ່າຍຄູ່ຮ່ວມງານ, ວຽກງານໂຄສະນາປະຊາສຳພັນ ແລະ ຂ່າວສານຂອງວິທະຍາໄລ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;
11. ວາງແຜນ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງພະແນກ ແລະ ວິທະຍາໄລ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງພະແນກພັດທະນາວິຊາການ**

ພະແນກພັດທະນາວິຊາການ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ, ຄຳແນະນຳ, ລະບຽບການ ແລະ ນິຕິກຳອື່ນ ກ່ຽວກັບວຽກງານພັດທະນາຫຼັກສູດ, ການຄຸ້ມຄອງການຮຽນ-ການສອນ, ການຄຸ້ມຄອງ ແລະ ພັດທະນາສື່ການຮຽນ-ການສອນ ເປັນແຕ່ລະໄລຍະ;
2. ຄຸ້ມຄອງ, ພັດທະນາ ຫຼັກສູດ, ການຄຸ້ມຄອງການຮຽນ-ການສອນ ລວມທັງໝົດໝວດວິຊາ ແລະ ໂມດູນທີ່ມີໃນທຸກຫຼັກສູດ, ຕິດຕາມ, ປະເມີນຜົນການຮຽນ-ການສອນ, ການຄຸ້ມຄອງ ແລະ ພັດທະນາສື່ການ

ຮຽນ-ການສອນ, ການຄຸ້ມຄອງຂໍ້ມູນສະຖິຕິຄູ-ອາຈານ ແລະ ນັກສຶກສາ, ການຄຸ້ມຄອງການປະພຶດ ຂອງນັກສຶກສາ, ການບໍລິການຫ້ອງສະໝຸດ;

3. ສ້າງແຜນພັດທະນາ ແລະ ປັບປຸງຄຸນນະພາບວຽກງານ ຂອງພະແນກພັດທະນາວິຊາການ ໃຫ້ໄດ້ຕາມມາດຕະຖານການປະກັນຄຸນນະພາບການສຶກສາ ທີ່ທາງກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ຈັດຕັ້ງການໂຄສະນາເຜີຍແຜ່ ວຽກງານປະກັນຄຸນນະພາບ ຢູ່ພາຍໃນ ແລະ ນອກ ວິທະຍາໄລ, ສັງລວມຫຼັກຖານ ວຽກງານປະກັນຄຸນນະພາບ, ຈັດຕັ້ງການປະເມີນພາຍໃນ, ການປະເມີນພາຍນອກ ແລະ ວາງແຜນປັບປຸງວິທະຍາໄລ ໃຫ້ມີຄຸນນະພາບດີ;
5. ຈັດຕັ້ງປະຕິບັດ ການປະຖົມນິເທດນັກສຶກສາ, ການໃຫ້ຄຳປຶກສາ ແລະ ແນະນຳ ອາຊີບແກ່ນັກສຶກສາ, ຕິດຕາມປະເມີນນັກສຶກສາພາຍຫຼັງຮຽນຈົບ, ການຄຸ້ມຄອງຫໍພັກ ແລະ ນັກສຶກສາ ໃຫ້ເປັນລະບຽບ ແລະ ມີວິໄນດີ;
6. ຈັດຕັ້ງປະຕິບັດກິດຈະກຳການເຄື່ອນໄຫວນອກຫຼັກສູດ ເຊັ່ນ: ວຽກສະມາຄົມນັກສຶກສາ, ວຽກງານສິລະປະວັນນະຄະດີ, ກິລາ, ວຽກອະນຸລັກວັດທະນະທຳ ແລະ ຮີດຄອງປະເພນີ;
7. ຈັດຕັ້ງປະຕິບັດກິດຈະກຳ ອະນຸລັກສິ່ງແວດລ້ອມ, ອາສາສະໝັກກຸ່ມອະນຸລັກສິ່ງແວດລ້ອມ, ການຮັກສາຄວາມສະອາດສວຍງາມ ຂອງວິທະຍາໄລ;
8. ຈັດຕັ້ງປະຕິບັດການແລກປ່ຽນບົດຮຽນ ດ້ານການຈັດການຮຽນ-ການສອນ, ວິທີການສິດສອນ, ການນຳໃຊ້ຫຼັກສູດກັບຄູ່ຮ່ວມງານຕ່າງໆ;
9. ຄຸ້ມຄອງພະນັກງານ-ລັດຖະກອນ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງວຽກງານຕ່າງໆ ພາຍໃນພະແນກພັດທະນາວິຊາການ;
10. ສ້າງແຜນພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ຄູອາຈານ ພາຍໃນຫ້ອງການ ໃຫ້ສົມຄູ່ກັບໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ;
11. ຄົ້ນຄວ້າ ແລະ ນຳສະເໜີຂໍຕຳແໜ່ງວິຊາການ ໃຫ້ແກ່ຄູອາຈານ ແລະ ນັກຄົ້ນຄວ້າ ທີ່ມີເງື່ອນໄຂຄົບຖ້ວນຕາມມາດຕະຖານຕຳແໜ່ງງານ;
12. ຄຸ້ມຄອງ, ຕິດຕາມ, ກວດກາ ການຂຶ້ນຫ້ອງສອນ ຂອງອາຈານ, ການຂຶ້ນຫ້ອງຮຽນ ຂອງນັກສຶກສາ ໃນທຸກຊັ້ນຮຽນ;
13. ປະສານສົມທົບກັບແຕ່ລະພາກວິຊາ ແຕ່ງຕັ້ງຄະນະຮັບຜິດຊອບການລົງຝຶກງານ ຂອງນັກສຶກສາ, ຊອກຫາສະຖານທີ່ຝຶກງານ ໃຫ້ນັກສຶກສາ ລວມທັງການຄຸ້ມຄອງ, ຕິດຕາມ ນັກສຶກສາ ຕະຫຼອດໄລຍະການຝຶກງານ;
14. ຄຸ້ມຄອງວັດຖຸອຸປະກອນ ແລະ ພາຫະນະຮັບໃຊ້ທັງໝົດ ຂອງພະແນກພັດທະນາວິຊາການ;
15. ວາງແຜນ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງພະແນກ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
16. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງພາກວິຊາປູກຝັງ**

ພາກວິຊາປູກຝັງ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ, ຄຳແນະນຳ, ລະບຽບການ ແລະ ນິຕິກຳອື່ນ ກ່ຽວກັບວຽກງານປູກຝັງເປັນແຕ່ລະໄລຍະ;

2. ຄຸ້ມຄອງ, ພັດທະນາ ເນື້ອໃນໂມດູນ, ຊຸດການສອນ ແລະ ສິດສອນວິຊາສະເພາະ ດ້ານການປູກຝັງ, ເຕັກໂນໂລຊີ ແລະ ການປັບປຸງພັດທະນາຟາມປູກພືດຕ່າງໆ, ການປ້ອງກັນພືດ; ນຳໃຊ້ດິນ, ບຳລຸງດິນ ແລະ ການນຳໃຊ້ຝຸ່ນ, ຄົ້ນຄວ້າທົດລອງ, ບໍລິການ ຝຶກອົບຮົມ ແລະ ສົ່ງເສີມວິຊາການດ້ານການປູກຝັງ ໃຫ້ແກ່ພະນັກງານຂະແໜງກະສິກຳ ແລະ ສິ່ງແວດລ້ອມ, ຊາວກະສິກອນ, ພະນັກງານຂອງໂຄງການ ແລະ ຫົວໜ່ວຍທຸລະກິດ ທີ່ມີຄວາມສົນໃຈ;
3. ສ້າງແຜນພັດທະນາ ແລະ ປັບປຸງຄຸນນະພາບວຽກງານຂອງພາກວິຊາປູກຝັງ ໃຫ້ໄດ້ຕາມມາດຕະຖານການປະກັນຄຸນນະພາບການສຶກສາ ຂອງກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ປັບປຸງ ແລະ ພັດທະນາ ການຝຶກງານ; ກະກຽມຄວາມພ້ອມດ້ານຕ່າງໆ ກ່ຽວກັບວຽກງານຝຶກງານ ຂອງນັກສຶກສາ ເປັນຕົ້ນ ສະເໜີຫົວຂໍ້ການຝຶກງານ, ຄົ້ນຄວ້າອາຈານທີ່ປຶກສາ ຕໍ່ພະແນກພັດທະນາວິຊາການ ແລະ ນຳພານັກສຶກສາລົງຝຶກງານ ພ້ອມທັງເປັນເຈົ້າການຕິດຕາມ, ຊຸກຍູ້ ນັກສຶກສາລົງຝຶກງານ ໃຫ້ສຳເລັດຜົນ ຢ່າງມີປະສິດທິພາບ;
5. ຄຸ້ມຄອງ ແລະ ພັດທະນາ ກິດຈະກຳສ້າງລາຍຮັບຈາກການເຄື່ອນໄຫວບໍລິການດ້ານເຕັກນິກວິຊາການດ້ານການປູກຝັງ ໃຫ້ແກ່ສັງຄົມ;
6. ຈັດຕັ້ງ ແລະ ຄຸ້ມຄອງບັນດາເຄື່ອງມື, ອຸປະກອນ ແລະ ສື່ການຮຽນ-ການສອນ ທີ່ຮັບໃຊ້ໃນພາກວິຊາປູກຝັງ ຢ່າງເປັນລະບົບ ແລະ ມີປະສິດທິຜົນ;
7. ຄຸ້ມຄອງພະນັກງານລັດຖະກອນ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງວຽກງານຕ່າງໆ ພາຍໃນພາກວິຊາປູກຝັງ;
8. ສ້າງຄວາມເຂັ້ມແຂງ, ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ຄູອາຈານ ໃນພາກວິຊາປູກຝັງໃຫ້ສົມຄູ່ກັບໜ້າທີ່ວຽກການ ທີ່ໄດ້ຮັບມອບໝາຍ;
9. ວາງແຜນ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງພາກວິຊາ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງພາກວິຊາລ້ຽງສັດ ແລະ ການປະມົງ**

ພາກວິຊາລ້ຽງສັດ ແລະ ການປະມົງ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ, ຄຳແນະນຳ, ລະບຽບການ ແລະ ນິຕິກຳອື່ນ ກ່ຽວກັບວຽກງານລ້ຽງສັດ ແລະ ການປະມົງ ເປັນແຕ່ລະໄລຍະ;
2. ຄຸ້ມຄອງ, ພັດທະນາ ເນື້ອໃນໂມດູນ, ຊຸດການສອນ ແລະ ສິດສອນວິຊາສະເພາະ ດ້ານການລ້ຽງສັດ ແລະ ການປະມົງ, ການປັບປຸງພັດທະນາຟາມລ້ຽງສັດ ແລະ ຟາມປະມົງ, ການວິໄຈກ່ຽວກັບສັດ ແລະ ສັດນ້ຳ, ການຈັດການສຸຂະພາບສັດ, ການຈັດການ ແລະ ປັບປຸງຄຸນນະພາບນ້ຳ, ການປັບປຸງ ແລະ ຂະຫຍາຍພັນສັດ ແລະ ສັດນ້ຳ, ການຄົ້ນຄວ້າທົດລອງ, ການຝຶກອົບຮົມ ແລະ ການສົ່ງເສີມວິຊາການດ້ານການລ້ຽງສັດ ແລະ ການປະມົງ;
3. ສ້າງແຜນພັດທະນາ ແລະ ປັບປຸງຄຸນນະພາບວຽກງານ ຂອງພາກວິຊາລ້ຽງສັດ ແລະ ການປະມົງ ໃຫ້ໄດ້ຕາມມາດຕະຖານການປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;

4. ປັບປຸງ ແລະ ພັດທະນາ ການຝຶກງານ; ກະກຽມຄວາມພ້ອມດ້ານຕ່າງໆ ກ່ຽວກັບວຽກງານຝຶກງານ ຂອງ ນັກສຶກສາ ເປັນຕົ້ນ ສະເໜີຫົວຂໍ້ການຝຶກງານ, ຄົ້ນຄວ້າອາຈານທີ່ປຶກສາຕໍ່ພະແນກພັດທະນາວິຊາການ ແລະ ນຳພານັກສຶກສາລົງຝຶກງານ ພ້ອມທັງເປັນເຈົ້າການຕິດຕາມ, ຊຸກຍູ້ ນັກສຶກສາລົງຝຶກງານ ໃຫ້ສຳເລັດຜົນ ຢ່າງມີປະສິດທິພາບ;
5. ຄຸ້ມຄອງ ແລະ ພັດທະນາ ກິດຈະກຳສ້າງລາຍຮັບ ຈາກຟາມລ້ຽງສັດ, ຟາມປະມົງ ແລະ ການປຸງແຕ່ງ ຜະລິດຕະພັນສັດ ໃຫ້ມີຄວາມຍືນຍົງ;
6. ຈັດຕັ້ງປະຕິບັດວຽກງານສຳຫຼວດ, ວິໄຈ, ປັບປຸງ, ອະນຸລັກ ແລະ ຂະຫຍາຍພັນສັດນ້ຳ, ສົ່ງເສີມ ແລະ ອະນຸລັກຊັບພະຍາກອນການປະມົງ;
7. ຄຸ້ມຄອງວັດຖຸອຸປະກອນ, ກົນຈັກ ແລະ ພາຫະນະຮັບໃຊ້ທັງໝົດ ຂອງພາກວິຊາລ້ຽງສັດ ແລະ ການປະມົງ;
8. ຄຸ້ມຄອງພະນັກງານ-ລັດຖະກອນ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງວຽກງານຕ່າງໆ ພາຍໃນພາກວິຊາລ້ຽງສັດ ແລະ ການປະມົງ;
9. ສ້າງຄວາມເຂັ້ມແຂງ, ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ຄູອາຈານ ໃນພາກວິຊາລ້ຽງສັດ ແລະ ການປະມົງ ໃຫ້ສົມຄູ່ກັບໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ;
10. ວາງແຜນ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງພາກວິຊາ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 11 ໜ້າທີ່ ຂອງພາກວິຊາທຸລະກິດກະສິກຳ**

ພາກວິຊາທຸລະກິດກະສິກຳ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ, ຄຳແນະນຳ, ລະບຽບການ ແລະ ນິຕິກຳອື່ນ ກ່ຽວກັບວຽກງານທຸລະກິດກະສິກຳ ເປັນແຕ່ລະໄລຍະ;
2. ຄຸ້ມຄອງ, ພັດທະນາເນື້ອໃນຊຸດການສອນ ແລະ ສິດສອນວິຊາສະເພາະ ດ້ານທຸລະກິດກະສິກຳ, ການລິເລີ່ມເຮັດທຸລະກິດກະສິກຳ, ການສ້າງລາຍຮັບ, ການພັດທະນາການຕະຫຼາດ, ທຸລະກິດຂະໜາດນ້ອຍ, ການເງິນຈຸລະພາກ, ການປຸງແຕ່ງຜົນຜະລິດກະສິກຳອອກຈຳໜ່າຍ, ການຄົ້ນຄວ້າທົດລອງດ້ານທຸລະກິດກະສິກຳ;
3. ສ້າງແຜນພັດທະນາ ແລະ ປັບປຸງຄຸນນະພາບວຽກງານ ຂອງພາກວິຊາທຸລະກິດກະສິກຳ ໃຫ້ໄດ້ຕາມມາດຕະຖານການປະກັນຄຸນນະພາບການສຶກສາ ຂອງກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ປັບປຸງ ແລະ ພັດທະນາ ການຝຶກງານ; ກະກຽມຄວາມພ້ອມດ້ານຕ່າງໆ ກ່ຽວກັບວຽກງານຝຶກງານ ຂອງ ນັກສຶກສາ ເປັນຕົ້ນ ສະເໜີຫົວຂໍ້ການຝຶກງານ, ຄົ້ນຄວ້າອາຈານທີ່ປຶກສາຕໍ່ພະແນກພັດທະນາວິຊາການ ແລະ ນຳພານັກສຶກສາລົງຝຶກງານ ພ້ອມທັງເປັນເຈົ້າການຕິດຕາມ, ຊຸກຍູ້ ນັກສຶກສາລົງຝຶກງານ ໃຫ້ສຳເລັດຜົນ ຢ່າງມີປະສິດທິພາບ;
5. ຄຸ້ມຄອງ ແລະ ພັດທະນາ ກິດຈະກຳສ້າງລາຍຮັບຈາກທຸລະກິດກະສິກຳ ເຊັ່ນ: ກິດຈະກຳສ້າງລາຍຮັບຂອງນັກສຶກສາ ແລະ ການປຸງແຕ່ງຜົນຜະລິດກະສິກຳ;
6. ຄຸ້ມຄອງວັດຖຸອຸປະກອນ ແລະ ພາຫະນະຮັບໃຊ້ທັງໝົດ ຂອງພາກວິຊາທຸລະກິດກະສິກຳ;

7. ຄຸ້ມຄອງພະນັກງານ-ລັດຖະກອນ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງວຽກງານຕ່າງໆ ພາຍໃນພາກວິຊາທຸລະກິດກະສິກຳ;
8. ສ້າງຄວາມເຂັ້ມແຂງ, ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ຄູອາຈານ ໃນພາກວິຊາທຸລະກິດກະສິກຳ ໃຫ້ສົມຄູ່ກັບໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ;
9. ວາງແຜນ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງພາກວິຊາ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 12 ໜ້າທີ່ ຂອງພາກວິຊາປ່າໄມ້ ແລະ ສິ່ງແວດລ້ອມ**

ພາກວິຊາປ່າໄມ້ ແລະ ສິ່ງແວດລ້ອມ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ, ຄຳແນະນຳ, ລະບຽບການ ແລະ ນິຕິກຳອື່ນ ກ່ຽວກັບວຽກງານປ່າໄມ້ ແລະ ສິ່ງແວດລ້ອມ ເປັນແຕ່ລະໄລຍະ;
2. ຄຸ້ມຄອງ, ພັດທະນາເນື້ອໃນໂມດູນ, ຊຸດການສອນ ແລະ ສິດສອນວິຊາສະເພາະ ດ້ານປ່າໄມ້ ແລະ ສິ່ງແວດລ້ອມ, ການຄຸ້ມຄອງປ່າໄມ້ປະເພດຕ່າງໆ, ການວິໄຈກ່ຽວກັບໄມ້, ສວນສາທິດ, ການປັບປຸງສວນກ້າເບ້ຍໄມ້ ແລະ ການອະນຸລັກຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມ;
3. ສ້າງແຜນພັດທະນາ ແລະ ປັບປຸງ ຄຸນນະພາບວຽກງານຂອງພາກວິຊາປ່າໄມ້ ແລະ ສິ່ງແວດລ້ອມ ໃຫ້ໄດ້ຕາມມາດຕະຖານການປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ປັບປຸງ ແລະ ພັດທະນາ ການຝຶກງານ; ກະກຽມຄວາມພ້ອມດ້ານຕ່າງໆ ກ່ຽວກັບວຽກງານຝຶກງານ ຂອງນັກສຶກສາ ເປັນຕົ້ນ ສະເໜີຫົວຂໍ້ການຝຶກງານ, ຄົ້ນຄວ້າອາຈານທີ່ປຶກສາຕໍ່ພະແນກພັດທະນາວິຊາການ ແລະ ນຳພານັກສຶກສາລົງຝຶກງານ ພ້ອມທັງເປັນເຈົ້າການຕິດຕາມ, ຊຸກຍູ້ ນັກສຶກສາລົງຝຶກງານ ໃຫ້ສຳເລັດຜົນ ຢ່າງມີປະສິດທິພາບ;
5. ຄຸ້ມຄອງ ແລະ ພັດທະນາ ກິດຈະກຳສ້າງລາຍຮັບ ຈາກຜະລິດຕະພັນປ່າໄມ້, ຜະລິດເບ້ຍໄມ້, ໄມ້ປະດັບ, ເຄື່ອງປ່າຂອງດົງ, ສວນສາທິດ ແລະ ອື່ນໆ;
6. ຄຸ້ມຄອງພະນັກງານລັດຖະກອນ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຕ່າງໆ ພາຍໃນພາກວິຊາປ່າໄມ້ ແລະ ສິ່ງແວດລ້ອມ;
7. ສ້າງຄວາມເຂັ້ມແຂງ, ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ຄູອາຈານ ໃນພາກວິຊາປ່າໄມ້ ແລະ ສິ່ງແວດລ້ອມ ໃຫ້ສົມຄູ່ກັບໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ;
8. ຄຸ້ມຄອງວັດຖຸອຸປະກອນ, ກົນຈັກ ແລະ ພາຫະນະຮັບໃຊ້ທັງໝົດ ຂອງພາກວິຊາປ່າໄມ້ ແລະ ສິ່ງແວດລ້ອມ;
9. ວາງແຜນ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງພາກວິຊາ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 13 ໜ້າທີ່ ຂອງພາກວິຊາສັດຕະວະແພດ**

ພາກວິຊາສັດຕະວະແພດ ມີໜ້າທີ່ ດັ່ງນີ້

1. ຈັດຕັ້ງຜັນຂະຫຍາຍ ມະຕິ, ຄຳສັ່ງ, ຄຳແນະນຳ, ລະບຽບການ ແລະ ນິຕິກຳອື່ນ ກ່ຽວກັບວຽກງານສັດຕະວະແພດ ເປັນແຕ່ລະໄລຍະ;
2. ຄຸ້ມຄອງ, ພັດທະນາເນື້ອໃນໂມດູນ, ຊຸດການສອນ ແລະ ສິດສອນວິຊາສະເພາະ ດ້ານວິຊາການສັດຕະວະແພດ, ການປັບປຸງພັດທະນາການວິໄຈ, ການຄົ້ນຄວ້າທົດລອງພະຍາດສັດ, ປິ່ນປົວສັດ;
3. ສ້າງແຜນພັດທະນາ ແລະ ປັບປຸງ ຄຸນນະພາບວຽກງານ ຂອງພາກວິຊາສັດຕະວະແພດ ໃຫ້ໄດ້ຕາມມາດຕະຖານການປະກັນຄຸນນະພາບການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ປັບປຸງ ແລະ ພັດທະນາ ການຝຶກງານ; ກະກຽມຄວາມພ້ອມດ້ານຕ່າງໆ ກ່ຽວກັບວຽກງານຝຶກງານ ຂອງນັກສຶກສາ ເປັນຕົ້ນ ສະເໜີຫົວຂໍ້ການຝຶກງານ, ຄົ້ນຄວ້າອາຈານທີ່ປຶກສາຕໍ່ພະແນກພັດທະນາວິຊາການ ແລະ ນຳພານັກສຶກສາລົງຝຶກງານ ພ້ອມທັງເປັນເຈົ້າການຕິດຕາມ, ຊຸກຍູ້ ນັກສຶກສາລົງຝຶກງານ ໃຫ້ສຳເລັດຜົນ ຢ່າງມີປະສິດທິພາບ;
5. ຄຸ້ມຄອງ ແລະ ພັດທະນາ ກິດຈະກຳສ້າງລາຍຮັບຈາກການປິ່ນປົວສັດ, ດູແລສຸຂະພາບສັດ ແລະ ສິ່ງເສີມດ້ານວິຊາການສັດຕະວະແພດ ຕາມຄວາມຕ້ອງການຂອງປະຊາຊົນ;
6. ຄຸ້ມຄອງພະນັກງານລັດຖະກອນ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຕ່າງໆ ພາຍໃນພາກວິຊາສັດຕະວະແພດ;
7. ສ້າງຄວາມເຂັ້ມແຂງ, ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານ-ຄູອາຈານ ໃນພາກວິຊາສັດຕະວະແພດ ໃຫ້ສົມຄູ່ກັບໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ;
8. ຄຸ້ມຄອງວັດຖຸອຸປະກອນ, ກົນຈັກ ແລະ ພາຫະນະຮັບໃຊ້ທັງໝົດ ຂອງພາກວິຊາສັດຕະວະແພດ;
9. ວາງແຜນ, ສະຫຼຸບ ແລະ ລາຍງານວຽກງານຕ່າງໆ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງພາກວິຊາ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 14 ຫຼັກການ**

ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດ ຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງວິທະຍາໄລ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ແລະ ພາລະກອນ ທຸກລະດັບ;

3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນໍາເອົາແນວທາງນະໂຍບາຍ ຂອງພັກ-ລັດຖະບານ ແລະ ນໍາເອົາແຜນການປະຈໍາປີ, ແຜນ 5 ປີ ຂອງກະຊວງກະສິກໍາ ແລະ ສິ່ງແວດລ້ອມ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 15 ແບບແຜນວິທີເຮັດວຽກ**

ວິທະຍາໄລກະສິກໍາ ແລະ ປ່າໄມ້ ບໍລິຄໍາໄຊ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນ ກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານ ໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍຂອງວຽກງານ ພ້ອມທັງປະຕິບັດລາຍງານສອງແສງ ຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນໍາແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄໍາເຫັນ ໃນການຈັດຕັ້ງປະຕິບັດແຜນການ ເປັນແຕ່ລະໄລຍະ;
4. ອໍານວຍການ ມີຄວາມຮັບຜິດຊອບໂດຍກົງຕໍ່ ຄະນະປະຈໍາພັກ, ຄະນະພັກ, ລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງຕົນ, ຮອງອໍານວຍການ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການແບ່ງງານ ແລະ ມອບ ໝາຍ ຂອງອໍານວຍການ;
5. ອໍານວຍການ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສໍາຄັນ, ໃນເວລາອໍານວຍການ ຕິດຂັດ ຕ້ອງມອບສິດໃຫ້ຮອງອໍານວຍການ ທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານ ທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ອໍານວຍການ ຊາບ ພາຍຫຼັງກັບມາປະຈໍາການ;
6. ປະຕິບັດລະບອບປະຊຸມ ປະຈໍາເດືອນ, 3 ເດືອນ, 6 ເດືອນ, ປະຈໍາປີ ແລະ ປະຕິບັດລະບອບລາຍງານ ໃຫ້ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 16 ງົບປະມານ ແລະ ຕາປະທັບ**

ວິທະຍາໄລກະສິກໍາ ແລະ ປ່າໄມ້ ບໍລິຄໍາໄຊ ມີງົບປະມານ ແລະ ຕາປະທັບ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 17 ການຈັດຕັ້ງປະຕິບັດ**

ວິທະຍາໄລກະສິກໍາ ແລະ ປ່າໄມ້ ບໍລິຄໍາໄຊ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກໍາ ແລະ ສິ່ງແວດລ້ອມ, ຂະແໜງກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ສະບັບເລກທີ 1735/ກປ, ລົງວັນທີ 05 ພຶດສະພາ 2022.

**ລັດຖະມົນຕີ**

**ປອ. ລິນຄຳ ດວງສະຫວັນ**